ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງ ອັດຕະປື

ເລກທີ 606 /ຈຂ.ອປ

ອັດຕະປື.ວັນທີ: 22-6-2016

# ຄຳສັ່ງແນະນຳ

## ກ່ຽວກັບ ການຈັດຕັ້ງປະຕິບັດ ຄຳສັ່ງ ເລກທີ 15/ນຍ ວ່າດ້ວຍ ການເພີ່ມທະວີຄວາມເຂັ້ມງວດ ໃນການຄຸ້ມຄອງ ແລະ ກວດກາ ການຂຸດຄົ້ນໄມ້ ເຄື່ອນຍ້າຍໄມ້ ແລະ ທຸລະກິດໄມ້

- ອີງຕາມ ກົດໝາຍວ່າດ້ວການປົກຄອງທ້ອງຖິ່ນແຫ່ງ ສ ປ ປ ລາວ ໝວດທີ III ມາດຕາ 14 ສະບັບເລກທີ 03/ສພຊ,ລົງວັນທີ 21 ຕຸລາ 2003. ວ່າດ້ວຍສິດ ແລະ ໜ້າທີ່ຂອງເຈົ້າແຂວງ.
- ອີງຕາມ ຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ,ລົງວັນທີ 13 ພຶດສະພາ 2016 ວ່າດ້ວຍ ການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ ແລະ ກວດກາການຂຸດຄົ້ນໄມ້,ເຄື່ອນຍ້າຍໄມ້ ແລະທຸລະກິດໄມ້.
- ອີງຕາມ ແຈ້ງການຂອງ ຫົວໜ້າ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 769/ຫສນຍ, ລົງວັນທີ 1 ມິຖຸນາ 2016. ກ່ຽວກັບການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ຄຳສັ່ງ ເລກທີ 15/ນຍ, ລົງວັນທີ 13 ພຶດສະພາ 2016.

ເພື່ອຮັບປະກັນ ຄວາມເຂົ້າໃຈເປັນເອກະພາບໃນທິດທາງດຽວກັນ ຕໍ່ກັບການເຊື່ອມຊຶມ ແລະ ຈັດຕັ້ງປະຕິບັດ ຄຳສັ່ງຂອງນາຍົກ ລັດຖະມົນຕີ ສະບັບ ເລກທີ 15/ນຍ, ລົງວັນທີ 13 ພຶດສະພາ 2016ໃຫ້ປະກົດຜົນເປັນຈິງ, ເຮັດໃຫ້ການຈັດຕັ້ງປະຕິບັດ ວຽກງານຄຸ້ມຄອງປ່າໄມ້, ການຂຸດຄົ້ນໄມ້, ທຸລະກິດໄມ້, ການປຸງແຕ່ງໄມ້ ແລະ ການເຄື່ອນຍ້າຍໄມ້ໃຫ້ມີຄວາມເຂັ້ມງວດ ຕາມກົດໝາຍ ແລະ ລະບຽບການ ທີ່ໄດ້ວາງອອກທັງເປັນການຕ້ານ, ສະກັດກັ້ນ ແລະ ແກ້ໄຂ ປະກົດການຫຍໍ້ທໍ້ ດ້ານຕ່າງໆ ໃນຂົງເຂດວຽກງານປ່າໄມ້ ໃຫ້ຫຼຸດລົງ ແລະ ໝົດໄປໃນຕໍ່ໜ້າ.

## ເຈົ້າ ແຂວງ ອອກຄຳສັ່ງແນະນຳ ດັ່ງນີ້:

1. ໃຫ້ບັນດາພະແນກການອ້ອມຂ້າງແຂວງ, ອຳນາດການປົກຄອງເມືອງ ແລະ ບ້ານ ຕ້ອງເພີ່ມທະວີຄວາມຮັບຜິດຊອບ ແລະ ເອົາໃຈໃສ່ ໃນການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດນິຕິກຳ ລະບຽບການ, ຕາມສິດ ແລະ ໜ້າທີ່ ໃນການຄຸ້ມຄອງ ແລະ ກວດກາການຂຸດຄົ້ນໄມ້, ການເຄື່ອນຍ້າຍໄມ້ ແລະ ທຸລະກິດໄມ້ ໃຫ້ມີປະສິດທິຜົນ ໂດຍຫັນການຄຸ້ມຄອງປ່າໄມ້ ໃຫ້ເຂົ້າສູ່ລະບຽບກົດໝາຍຢ່າງເຂັ້ມງວດ. ພ້ອມດຽວກັນນັ້ນ ໃຫ້ຖືສຳຄັນວຽກງານໂຄສະນາ,ສຶກສາອົບຮົມ,ເຜີຍແຜ່ເຊື່ອມຊຶມແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ ແລະ ສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ ກ່ຽວກັບ ການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ໃຫ້ພະນັກງານ, ທະຫານ, ຕຳຫຼວດ, ນັກທຸລະກິດ ຜູ້ປະກອບການ ຕະຫຼອດຮອດ ພໍ່ແມ່ປະຊາຊົນບັນດາເຜົ່າ ຮັບຮູ້ ເຂົ້າໃຈ ແລະ ເປັນເອກະພາບກັນ ໃນທົ່ວແຂວງ.
2. ໃຫ້ພະແນກກະສິກຳ ແລະ ປ່າໄມ້ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເອົາໃຈໃສ່ ຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ ໃນການຄຸ້ມຄອງ ກວດກາການເຄື່ອນຍ້າຍໄມ້ ແລະ ເຄື່ອງປ່າຂອງດົງ ບໍ່ໃຫ້ເອື້ອອຳນວຍຄວາມສະ

ດວກ ແລະ ບໍ່ໃຫ້ອອກໃບອະນຸຍາດເຄື່ອນຍ້າຍ ໄມ້ທ່ອນ, ໄມ້ຕີຕັບ, ໄມ້ແປຮູບ, ໄມ້ຊອຍ, ຮາກໄມ້ ຫຼື ເຫງົ້າໄມ້, ຕໍໄມ້, ປູດໄມ້, ງ່າໄມ້ ທີ່ຍັງບໍ່ທັນໄດ້ປຸງແຕ່ງເປັນຜະລິດຕະພັນໄມ້ສຳເລັດຮູບ ລວມທັງໄມ້ຢືນຕົ້ນ ຫຼື ໄມ້ປະດັບ ທີ່ຂຸດຄົ້ນອອກຈາກ ປ່າທຳມະຊາດ ໄປຕ່າງປະເທດໃນທຸກກໍລະນີ ຢ່າງເດັດຂາດ. ພ້ອມກັນນີ້ ກໍ່ໃຫ້ປັບປຸງຄືນກົນໄກ ການເຄື່ອນຍ້າຍໄມ້ ແລະ ເຄື່ອງປ່າຂອງດົງ ຢູ່ພາຍໃນ ແລະ ການສົ່ງອອກ ຜະລິດຕະພັນໄມ້ສຳເລັດຮູບໄປຕ່າງປະເທດ ໃຫ້ມີຄວາມຮັດກຸມ ແລະ ເຂັ້ມງວດ.

3. ບໍ່ໃຫ້ພະແນກການທີ່ກ່ຽວຂ້ອງ ແລະ ອຳນາດການປົກຄອງເມືອງ ສ້າງທຸກເງື່ອນໄຂ, ເພື່ອເອື້ອອຳນວຍຄວາມສະດວກອະນຸຍາດນຳເຂົ້າໄມ້ ແລະ ເຄື່ອງປ່າຂອງດົງ ຈາກຕ່າງປະເທດ ແລະ ນຳຜ່ານໄປປະເທດທີສາມ ໂດຍທີ່ບໍ່ຖືກຕ້ອງ ຕາມລະບຽບກົດໝາຍ ຢ່າງເດັດຂາດ.
4. ໃຫ້ພະແນກກະສິກຳ ແລະ ປ່າໄມ້ ປະສານສົມທົບ ກັບສາຍຕັ້ງຂອງຕົນ ສືບຕໍ່ ສຳຫລວດກ່ອນການຂຸດຄົ້ນໃນ 3 ເຂດປ່າຜະລິດຂອງແຂວງ ທີ່ໄດ້ມີການສຳຫລວດຈັດສັນແລ້ວ ເພື່ອລາຍງານໃຫ້ລັດຖະບານພິຈາລະນາ.
5. ໃຫ້ບັນດາພະແນກການທີ່ກ່ຽວຂ້ອງ ແລະ ອຳນາດການປົກຄອງເມືອງ ແລະ ບ້ານ ຢຸດຕິຢ່າງຊົ່ວຄາວ ກ່ຽວກັບການສະເໜີດຳເນີນສຳຫຼວດ ແລະ ການສະເໜີອະນຸຍາດເກັບກູ້ທ່ອນໂຮມ ໄມ້ປົກ, ໄມ້ກິ່ງງ່າ, ໄມ້ທ່ອນສັ້ນ, ໄມ້ທ່ອນປາຍ ແລະ ໄມ້ນອນຂອນຕາຍ ທີ່ຍັງຕົກຄ້າງຕາມປ່າ ແລະ ຕາມເຮືອນປະຊາຊົນໃນທຸກກໍລະນີ.
6. ໃນກໍລະນີທາກມີການຂຸດຄົ້ນໄມ້ ເຂດພັດທະນາກໍ່ສ້າງພື້ນຖານໂຄງລ່າງ ເຊັ່ນ: ແລວບຸກເບີກກໍ່ສ້າງເສັ້ນທາງໃໝ່, ເຂດກໍ່ສ້າງເຂື່ອນໄຟຟ້າ, ແລວສາຍສົ່ງໄຟຟ້າ, ເຂດຂຸດຄົ້ນແຮ່ທາດ, ເຂດກໍ່ສ້າງຊົນລະປະທານ, ເຂດບຸກເບີກເນື້ອທີ່ເພື່ອທຳການຜະລິດກະສິກຳ, ເຂດຈັດສັນຍົກຍ້າຍ ແລະ ອື່ນໆ ແມ່ນໃຫ້ດຳເນີນ ສະເພາະ ແຕ່ຢູ່ໃນເຂດ ທີ່ລັດຖະບານໄດ້ຮັບຮອງແລ້ວ ແຕ່ຕ້ອງໄດ້ຜ່ານການສຳຫຼວດ ເກັບກຳຂໍ້ມູນ ຊະນິດພັນໄມ້, ຈຳນວນໄມ້ຢືນຕົ້ນ ແລະ ບໍລິມາດໄມ້ ຕາມລະບຽບຫຼັກການແລ້ວ ຈຶ່ງສະເໜີກະຊວງກະສິກຳ ແລະ ປ່າໄມ້ ພິຈາລະນາເພື່ອສັງລວມ ເຂົ້າໃນແຜນສະເໜີຂຸດຄົ້ນປະຈຳປີ ໃນນັ້ນໃຫ້ປະຕິບັດດັ່ງນີ້:
   6.1 ການຂຸດຄົ້ນໄມ້ໃນຂອບເຂດອ່າງເກັບນ້ຳເຂື່ອນໄຟຟ້ານ້ຳຕົກ ໃຫ້ປະຕິບັດຕາມລະບຽບການ ວ່າດ້ວຍການຂຸດຄົ້ນໄມ້ ແລະ ອະນາໄມ ຫຼັງການຂຸດຄົ້ນ ໃນຂອບເຂດອ່າງເກັບນ້ຳເຂື່ອນໄຟຟ້ານ້ຳຕົກ, ສະບັບເລກທີ 0112/ກປ, ລົງວັນທີ 25 ພະຈິກ 2008 ຢ່າງເຂັ້ມງວດ.
   6.2 ການຂຸດຄົ້ນໄມ້ ເຂດແລວທາງ ໃຫ້ປະຕິບັດ ຕາມແຈ້ງການ ຂອງ ຫ້ອງວ່າການລັດຖະບານ, ສະບັບເລກທີ 1434/ຫລບ.ກລຂ, ລົງວັນທີ 15/10/2014,ໃນຂໍ້ (3) ການຕັດໄມ້ອອກຈາກແລວທາງ ແມ່ນບໍ່ໃຫ້ກາຍເບື້ອງລະ 5 (ຫ້າ) ແມັດ ແຕ່ຂອບທາງອອກໄປ.
   6.3 ການຂຸດຄົ້ນໄມ້ ແລວສາຍໄຟ ຕ້ອງສຳຫຼວດຂຶ້ນບັນຊີໝາຍຕົ້ນໄມ້ ເພື່ອຕັດ ໃຫ້ປະຕິບັດ ຕາມລະ ບຽບການວ່າດ້ວຍຄວາມປອດໄພ ສຳລັບພາກສາຍສົ່ງໄຟຟ້າ ແລະ ສະຖານີແຮງສູງ ສະບັບເລກທີ 2272/ຟຟລ, ລົງວັນທີ 05/10/2011, ຂອງ ກະຊວງການພະລັງງານ ແລະ ບໍ່ແຮ່ ດັ່ງລາຍລະອຽດລຸ່ມນີ້:
      - ຂະໜາດ 22 ກິໂລໂວນ ໃຫ້ຕັດໃນຂອບເຂດຈາກຈຸດໃຈກາງແລວສາຍໄຟ ເບື້ອງລະ 4,5 ແມັດ.
      - ຂະໜາດ 35 ກິໂລໂວນ ໃຫ້ຕັດໃນຂອບເຂດຈາກຈຸດໃຈກາງແລວສາຍໄຟ ເບື້ອງລະ 5,5 ແມັດ.
      - ຂະໜາດ 115 ກິໂລໂວນ ໃຫ້ຕັດໃນຂອບເຂດຈາກຈຸດໃຈກາງແລວສາຍໄຟ ເບື້ອງລະ 12,5 ແມັດ.
      - ຂະໜາດ 230 ກິໂລໂວນ ໃຫ້ຕັດໃນຂອບເຂດຈາກຈຸດໃຈກາງແລວສາຍໄຟ ເບື້ອງລະ 17,5 ແມັດ.
      - ຂະໜາດ 500 ກິໂລໂວນ ໃຫ້ຕັດໃນຂອບເຂດຈາກຈຸດໃຈກາງແລວສາຍໄຟ ເບື້ອງລະ 35 ແມັດ.
   6.4 ການຂຸດຄົ້ນໄມ້ ຢູ່ໃນເຂດທີ່ລັດຖະບານອະນຸມັດ ເຊັ່ນ: ເຂດຂຸດຄົ້ນ ແລະ ຊອກຄົ້ນແຮ່ທາດ, ເຂດບຸກເບີກເນື້ອທີ່ທຳການຜະລິດກະສິກຳ ແລະ ອື່ນໆ, ໃຫ້ພະແນກກະສິກຳ ແລະ ປ່າໄມ້ ສົມທົບກັບພາກສ່ວນກ່ຽວຂ້ອງ ແລະ ອຳນາດການປົກຄອງທ້ອງຖິ່ນຮາກຖານບ້ານ ແຕ່ງຕັ້ງຄະນະຮັບຜິດຊອບ ເປັນອັນສະເພາະ ເພື່ອເຮັດໜ້າທີ່ຄຸ້ມຄອງ, ຕິດຕາມ, ກວດກາການຕັດໄມ້, ເຄື່ອນຍ້າຍໄມ້ ຢ່າງເຂັ້ມງວດ. ບໍ່

ອະນຸຍາດ ແລະ ອໍານວຍຄວາມສະດວກໃຫ້ ຜູ້ພັດທະນາໂຄງການ ຫຼື ຫົວໜ່ວຍຮັບເໝົາກໍ່ສ້າງພື້ນຖານໂຄງລ່າງຕ່າງໆ ເປັນຜູ້ຮັບຜິດຊອບຂຸດຄົ້ນໄມ້ເອງ.

6.5 ສໍາລັບການຕັດໄມ້ ເພື່ອເປັນແຫຼ່ງພະລັງງານ ເຊັ່ນ: (ໄມ້ຟືນ, ໄມ້ຜະລິດຖ່ານ), ໄມ້ຫຼັກຮົ້ວ, ໄມ້ຄໍ້າແບບ ແມ່ນອະນຸຍາດໃຫ້ດໍາເນີນໄດ້ໃນເຂດການກໍ່ສ້າງພື້ນຖານໂຄງລ່າງ ແລະ ເຂດບຸກເບີກເນື້ອທີ່ທໍາການຜະລິດກະສິກໍາ ທີ່ລັດຖະບານອະນຸຍາດເທົ່ານັ້ນ. ສ່ວນການຕັດຈາກເນື້ອທີ່ຄຸ້ມຄອງຂອງປະຊາຊົນ ແລະ ປ່າຊົມໃຊ້ຂອງບ້ານ ແມ່ນອະນຸຍາດໃຫ້ດໍາເນີນໄດ້ ໃນເຂດທີ່ໄດ້ຜ່ານການມອບດິນ - ມອບປ່າ ແລະ ມີການຄຸ້ມຄອງຈັດສັນປ່າໄມ້ບ້ານ ທີ່ໄດ້ຜ່ານການສໍາຫຼວດຕາມລະບຽບການ ໂດຍໃຫ້ສັງລວມເຂົ້າແຜນສະເໜີຂຸດຄົ້ນໄມ້ປະຈໍາປີ.

7 ໃຫ້ພະແນກກະສິກໍາ ແລະ ປ່າໄມ້ ເປັນເຈົ້າການໃນການຄຸ້ມຄອງ ແລະ ກວດກາແຜນການຂຸດຄົ້ນໄມ້ປະຈໍາປີ, ຖ້າເຫັນວ່າ ມີການຂຸດຄົ້ນເກີນແຜນການອະນຸມັດ ໃຫ້ຢຶດໄມ້ມາເປັນຂອງລັດ ພ້ອມທັງ ດໍາເນີນຄະດີ ຕໍ່ຜູ້ກະທໍາຜິດ ຢ່າງເຂັ້ມງວດ, ສ່ວນໄມ້ທີ່ກຸ່ມຄົນບໍ່ດີ ລັກລອບຕັດ ຕາມເຂດຊາຍແດນ ຫຼື ຕາມປ່າປະເພດຕ່າງໆ ໂດຍບໍ່ໄດ້ຮັບອະນຸຍາດ, ຜິດຕໍ່ລະບຽບກົດໝາຍ ແລະ ຍັງຄ້າງຢູ່ໃນປ່ານັ້ນ ແມ່ນໃຫ້ຢຸດເຊົາການເກັບກູ້ ແລະ ທ້ອນໂຮມອີກ ເພາະຈະເປັນຊ່ອງຫວ່າງ ໃຫ້ແກ່ການລັກລອບຕັດໄມ້ ແລະ ສ້າງເງື່ອນໄຂ ໃນການສະເໜີອະນຸຍາດເກັບກູ້ ແລະ ທ້ອນ ໂຮມຕໍ່ໄປ.

8 ໃຫ້ພະແນກກະສິກໍາ ແລະ ປ່າໄມ້ ,ພະແນກອຸດສາຫະກໍາ ແລະ ການຄ້າ, ພະແນກການເງິນ ຮີບຮ້ອນສັງລວມຕົວເລກໄມ້ຄ້າງ ທີ່ຍັງບໍ່ທັນໄດ້ຖອກພັນທະອາກອນຕ່າງໆ ຢູ່ສະໜາມ II ທີ່ໄດ້ຮັບອະນຸຍາດ ໃຫ້ຂຸດຄົ້ນ ໃນສົກປີທີ່ຜ່ານມາ ລວມທັງການຂຸດຄົ້ນ ແລະ ທ້ອນໂຮມໃນສົກປີນີ້ ເພື່ອລາຍງານການນໍາຂັ້ນແຂວງຊາບ ເພື່ອສະເໜີໃຫ້ລັດຖະບານ ພິຈາລະນາ ປະມູນຂາຍ ໃຫ້ແກ່ສະມາຄົມປຸງແຕ່ງໄມ້ ແລະ ສະມາຄົມເຟີນີເຈີລາວ ຫຼື ຜູ້ປະກອບການອື່ນໆ ທີ່ມີເງື່ອນໄຂເພື່ອນໍາໄປປຸງແຕ່ງເປັນຜະລິດຕະພັນສໍາເລັດຮູບ ນໍາໃຊ້ ພາຍໃນ ຫຼື ສົ່ງອອກໄປຕ່າງປະເທດ.

9 ໃຫ້ພະແນກກະສິກໍາ ແລະ ປ່າໄມ້ ສືບຕໍ່ ສົມທົບກັບ ພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າ ກ່ຽວກັບ ການສ້າງຕັ້ງກອງຂຸດຄົ້ນໄມ້ ຫຼື ວິສາຫະກິດຂຸດຄົ້ນໄມ້ ໂດຍນໍາໃຊ້ທ່າແຮງ ຂອງພາກລັດ ແລະ ຜູ້ປະກອບການ ທີ່ເປັນໜ່ວຍງານເຄື່ອນໄຫວແບບວິຊາຊີບເປັນປົກກະຕິຕໍ່ເນື່ອງ, ຕິດພັນກັບການຟື້ນຟູ,ປົກປັກຮັກສາ ແລະ ບຸລະນະປ່າໄມ້, ໃນກໍລະນີ ຫາກບໍ່ສາມາດສ້າງຕັ້ງເປັນກອງຂຸດຄົ້ນໄມ້ ຫຼື ວິສາຫະກິດຂຸດຄົ້ນໄມ້ໄດ້ ໃນເບື້ອງຕົ້ນໃຫ້ຄົ້ນຄວ້າ ແລະ ນໍາໃຊ້ທ່າແຮງຂອງຜູ້ປະກອບການ ທີ່ບໍ່ຕິດພັນກັບການຊື້ - ຂາຍໄມ້ ໂດຍມີການຈົດທະບຽນໃຫ້ຖືກຕ້ອງຕາມກົດໝາຍ ແລະ ໄດ້ຮັບການອະນຸຍາດຈາກຂະແໜງກ່ຽວຂ້ອງ ເພື່ອເຮັດໜ້າທີ່ ບໍລິການຂຸດຄົ້ນໄມ້ ເປັນອັນສະເພາະ.

10 ໃຫ້ພະແນກອຸດສາຫະກໍາ ແລະ ການຄ້າ ເປັນໃຈກາງໃນການປະສານສົມທົບ ກັບ ພະແນກກະສິກໍາ ແລະ ປ່າໄມ້ ແລະ ພະແນກການເງິນ ຊຸ້ນຊ້ຽວກວດກາຄືນ ບັນດາໂຮງງານປຸງແຕ່ງໄມ້,ໂຮງງານເຟີນີເຈີ ລວມທັງໂຮງງານທີ່ນໍາໃຊ້ໄມ້ເປັນພະລັງງານເຊັ່ນ: ເຕົາເຜົາຖ່ານ,ເຕົາເຜົາດິນຈີ່ ໃນທົ່ວແຂວງ ເພື່ອດໍາເນີນການດັດສົມໃຫ້ສໍາເລັດໂດຍໄວ. ສໍາລັບໂຮງງານທີ່ໄດ້ຮັບອະນຸຍາດ ໃຫ້ດໍາເນີນການເຄື່ອນໄຫວປະຕິບັດຕາມລະບຽບ ກົດໝາຍຢ່າງເຂັ້ມງວດ, ສ່ວນໂຮງງານປຸງແຕ່ງໄມ້ ຫຼື ໂຮງງານເຟີນີເຈີຕ່າງໆ ທີ່ບໍ່ໄດ້ຮັບອະນຸຍາດ ໃຫ້ຢຸດຕິການເຄື່ອນໄຫວກິດຈະການຢ່າງຂາດຕົວ. ພ້ອມດຽວກັນນີ້ ກໍ່ໃຫ້ສືບຕໍ່ ຢ່າງເຂັ້ມງວດ ໃນການຕິດຕາມຄຸ້ມຄອງການເຄື່ອນຍ້າຍໄມ້ເຂົ້າ ແລະ ໄມ້ອອກໂຮງງານ ພາຍໃນແຂວງ ໂດຍມີປຶ້ມຕິດຕາມ, ໃນທຸກໆທ້າຍປີຕ້ອງໄດ້ຈັດຕັ້ງກວດກາ ເພື່ອຕັ້ງບັນຊີສົມໂມງ.

11 ໃຫ້ພະແນກ ກະສິກໍາ ແລະ ປ່າໄມ້ ເປັນເຈົ້າການ ສົມທົບກັບ ພະແນກຊັບພະຍາກອນ ທໍາມະຊາດ ແລະ ສິ່ງແວດລ້ອມ,ກອງບັນຊາການທະຫານແຂວງ, ອໍານາດການປົກຄອງເມືອງ ແລະ ບ້ານ ເຂັ້ມງວດໃນການ

ກວດກາລາດຕະເວນຕາມເຂດຫລໍ່ແຫຼມລຽບຕາມຊາຍແດນທີ່ມີການລັກລອບຂຸດຄົ້ນໄມ້, ເຄື່ອນຍ້າຍໄມ້ ແລະ ບຸກລຸກເນື້ອທີ່ປ່າໄມ້ ທີ່ບໍ່ຖືກຕ້ອງຕາມລະບຽບກົດໝາຍ.

12 ໃຫ້ພະແນກກະສິກຳ ແລະ ປ່າໄມ້ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ພະແນກການເງິນ ແລະ ພະແນກອຸດສາຫະກຳ ແລະ ການຄ້າ ກວດກາ ແລະ ປັບປຸງຄືນ ແບບແຜນວິທີເຮັດວຽກ, ດ້ານບຸກຄະລາກອນ ທີ່ເຮັດໜ້າທີ່ ເຄື່ອນໄຫວວຽກງານການຄຸ້ມຄອງປ່າໄມ້, ກວດກາປ່າໄມ້ ຕາມເສັ້ນທາງຫຼວງ, ຈຸດທີ່ຫຼໍ່ແຫຼມ ແລະ ຈຸດກວດກາປະຈຳຢູ່ແຕ່ລະດ່ານ, ໃຫ້ຈັດຕັ້ງປະຕິບັດ ການປະສານສົມທົບກັນຢ່າງກົມກຽວ ແລະ ປະຕິບັດໜ້າທີ່ຕາມພາລະບົດບາດຂອງໃຜລາວຢ່າງເຂັ້ມງວດ ຖ້າເຫັນວ່າ ບໍ່ຈຳເປັນ ກໍ່ໃຫ້ຫຍຸບເລີກ ເພາະຈະເປັນສ່ອງວ່າງ ໃຫ້ພະນັກງານວິຊາການສວຍໂອກາດ ຫາຜົນປະໂຫຍດໃຫ້ແກ່ຕົນ. ພ້ອມດຽວກັນນັ້ນ ກໍ່ໃຫ້ກະກຽມ ຈັດຕັ້ງພະນັກງານປ່າໄມ້ ລົງເຄື່ອນໄຫວປະຈຳ ຢູ່ແຕ່ລະປະເພດປ່າ ໂດຍມີການເຂົ້າຮ່ວມຂອງປະຊາຊົນເພື່ອເຮັດ ການເວນຍາມເຝົ້າລະວັງບໍ່ໃຫ້ມີການລັກລອບຂຸດຄົ້ນໄມ້.

13 ໃຫ້ພະແນກກະສິກຳ ແລະ ປ່າໄມ້ ສົມທົບກັບພະແນກອຸດສະຫະກຳ ແລະ ການຄ້າ , ພະແນກການເງິນ ແລະ ພະແນກໂຍທາທິການ ແລະ ຂົນສົ່ງ ເອົາໃຈໃສ່ ສົມທົບກັບກວດກາ ການນຳເຂົ້າ, ການຊື້ - ຂາຍ, ການມີໄວ້ໃນຄອບຄອງ ແລະ ການນຳໃຊ້ເຄື່ອງມືອຸປະກອນ ຈັກຕັດໄມ້ທຸກຊະນິດ ແລະ ພາຫະນະຂຸດຄົ້ນ ຂົນສົ່ງໄມ້ ທີ່ບໍ່ໄດ້ຮັບອະນຸຍາດ, ຖ້າມີການຊຸກເຊື່ອງ ເພື່ອລັກລອບນຳໃຊ້ ແມ່ນໃຫ້ຢຶດໄວ້ ແລ້ວດຳເນີນຄະດີ ຕໍ່ຜູ້ກະທຳຜິດຕາມລະບຽບກົດໝາຍຢ່າງເຂັ້ມງວດ. ພ້ອມດຽວກັນນັ້ນ, ກໍ່ໃຫ້ເຂັ້ມງວດ ໃນການຕ້ານ ແລະ ສະກັດກັ້ນ ການລ່າ, ການເຄື່ອນຍ້າຍ, ການຊື້ - ຂາຍ ສັດນ້ຳ - ສັດປ່າ ທີ່ຫວງຫ້າມຕາມທ້ອງຕະຫຼາດ, ການນຳເຂົ້າ - ສົ່ງອອກສັດນ້ຳ - ສັດປ່າ ແລະ ສິ້ນສ່ວນສັດປ່າ ມາຜ່ານແດນໄປປະເທດທີສາມ ຢ່າງເດັດຂາດ.

14 ໃຫ້ພະແນກກະສິກຳ ແລະ ປ່າໄມ້ ເປັນເຈົ້າການປະສານສົມທົບ ກັບພາກສ່ວນທີ່ກ່ຽວຂ້ອງ ແລະ ອຳນາດການປົກຄອງເມືອງ ຮັບຜິດຊອບຕິດຕາມກວດກາ ແລະ ລາຍງານໃຫ້ການນຳຂອງແຂວງຮັບຊາບ ການຈັດຕັ້ງປະຕິບັດຄຳສັ່ງແນະນຳສະບັບນີ້ ເປັນແຕ່ລະໄລຍະ ເພື່ອແກ້ໄຂບັນຫາຕ່າງໆ ທີ່ອາດຈະເກີດຂຶ້ນ ໃຫ້ທັນກັບສະພາບການ.

15 ໃຫ້ຄະນະປະຈຳພັກແຂວງ, ຫົວໜ້າ ພະແນກການ, ກອງບັນຊາການ ປກສ, ປກຊ, ເຈົ້າເມືອງ 5 ຕົວເມືອງໃນທົ່ວແຂວງ ໃຫ້ກຳແໜ້ນ ພ້ອມທັງຜັນຂະຫຍາຍ ໃຫ້ກາຍເປັນໜ້າວຽກອັນລະອຽດ ຕາມໜ້າທີ່ ຄວາມຮັບຜິດຊອບຂອງຕົນໂດຍໄວ ແລະ ຈັດຕັ້ງປະຕິບັດໃຫ້ມີຜົນສຳເລັດເປັນຢ່າງດີ, ໃນກໍລະນີພາກສ່ວນ ແລະ ທ້ອງຖິ່ນໃດຫາກລະເມີດ ຕໍ່ຄຳສັ່ງແນະນຳສະບັບນີ້ ແມ່ນພາກສ່ວນນັ້ນຮັບຜິດຊອບຕໍ່ລະບຽບກົດໝາຍ.

16 ຄຳສັ່ງແນະນຳສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ບັນດາຄຳສັ່ງ, ຂໍ້ຕົກລົງ, ແຈ້ງການຕ່າງໆ ທີ່ໄດ້ອອກໃນໄລຍະຜ່ານມາ ທີ່ມີເນື້ອໃນຂັດກັບຄຳສັ່ງແນະນຳສະບັບນີ້ ລ້ວນແຕ່ຖືກລົບລ້າງ.

**ເຈົ້າ ແຂວງ**

<u>ສຳເນົາສົ່ງ:</u>

- ຫ້ອງວ່າການ ປົກຄອງແຂວງ 1 ສະບັບ
- ບັນດາພະແນກການ ກົມກອງ ອ້ອມຂ້າງແຂວງ 1 ສະບັບ
- ຫ້ອງວ່າການປົກ 5 ເມືອງ ໆລະ 1 ສະບັບ
- ເກັບມ້ຽນ 2 ສະບັບ

ແຂວງອັດຕະປື
ເຈົ້າແຂວງແຂວງອັດຕະປື

ດຣ.ນາມ ວິຍະເກດ